ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຜົນດໍາເນີນງານ ສສງ ມິດຕະພາບປີ 2020



ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດມິດຕະພາບ (ສສງມ) ໄດ້ຈັດຕັ້ງກອງປະຊຸມສະຫຼູບຜົນດໍາເນີນງານ ປະຈໍາປີ 2020 ແລະ ແຜນການເຄື່ອນໄຫວປີ 2021 ແລະເລືອກຕັ້ງຄະນະສະພາບໍລິຫານ ຊຸດໃໝ່ໃນວັນທີ 13 ມີນາ 2021 ທີ່ສະໂມສອນເມືອງໄຊທານີ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ທອງສີ ຣົງນູ ປະທານສະພາບໍລິຫານ ສສງມ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ຄໍາພັນ ສຸລິຍະບັນ ຮອງເຈົ້າເມືອງໄຊທານີ; ຜູ້ຕາງໜ້າຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ (ທຫລ); ຄະນະສະພາບໍລິຫານ-ຄະນະອໍານວຍການ, ພະນັກງານ-ສະມາຊິກ ສສງມ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງຄົບຖ້ວນ.

ທ່ານປະທານສະພາບໍລິຫານ ສສງມ ໄດ້ກ່າວວ່າ: ສສງມ ແມ່ນການຈັດຕັ້ງທຸລະກິດລວມໝູ່ທີ່ສ້າງຂຶ້ນຕາມໃບອະນຸຍາດຈາກກົມຄຸ້ມຄອງສະຖາບັນການເງິນ ທຫລ ແລະ ຈົດທະບຽນວິສາຫະກິດຈາກກະຊວງການຄ້າໃນປີ 2009 ແລະ ໃນປະຈຸບັນໂຄງປະກອບການຈັດຕັ້ງມີສະມາຊິກສະພາບໍລິຫານ 5 ຄົນ, ຄະນະກໍາມະການກວດກາ 3 ຄົນ, ຄະນະກໍາມະການສິນເຊື່ອ 5 ຄົນ; ຜູ້ອໍານວຍການ-ພະນັກງານລວມ 7 ຄົນ; ມາເຖິງທ້າຍເດືອນທັນວາ 2020 ມີສະມາຊິກທັງໝົດ 1.001 ຄົນ.

ກ່ຽວກັບການເຄື່ອນໄຫວດໍາເນີນງານ, ສະພາບໍລິຫານໄດ້ຈັດກອງປະຊຸມສະຫຼູບປະຈໍາເດືອນທຸກໆເດືອນເພື່ອທົບທວນກວດກາຄືນຜົນການດໍາເນີນງານຮອບດ້ານໃນເດືອນຜ່ານມາ ແລະ ວາງແຜນເດືອນຕໍ່ໄປ; ຈາກນັ້ນ, ກໍ່ສົ່ງບົດສະຫຼຸບລາຍງານໃຫ້ກົມຄຸ້ມຄອງສະຖາບັນການເງິນ ທຫລ ເປັນປົກກະຕິ; ດ້ານວຽກງານສິນເຊື່ອ ກໍ່ໄດ້ປັບປຸງດອກເບ້ຍເງິນກູ້ຈາກ 2,8% ມາເປັນ 2,7% ພ້ອມນີ້ ຍັງພົບປະສະມາຊິກຂອງຕົນຢູ່ກັບບ້ານເຮືອນໂດຍສະເພາະສະມາຊິກຜູ້ທີ່ຂໍກູ້ເງິນແຕ່ເງື່ອນໄຂບໍ່ພຽງພໍເພື່ອຊ່ວຍປຶກສາແນະນໍາກ່ຽວກັບເງິນກູ້; ຫາວິທີ ແລະ ສ້າງເງື່ອນໄຂໃຫ້ສະມາຊິກໄດ້ຮັບວົງເງິນກູ້ທີ່ເໝາະສົມກັບຄວາມສາມາດໃນການຊໍາລະຄືນ ທັງນີ້ເພື່ອຫຼີກເວັ້ນການສ້າງພາລະໜີ້ສິນເກີນຄວາມສາມາດຂອງສະມາຊິກ.

ສະເພາະດ້ານເງິນຝາກ, ສສງມ ໄດ້ວາງນະໂຍບາຍເງິນຝາກທີ່ມີລັກສະນະຈູງໃຈເພື່ອສົ່ງເສີມການປະຢັດເງິນໃນອັດຕາດອກເບ້ຍທີ່ເໝາະສົມ; ຂະນະດຽວກັນ ສສງມ ໄດ້ຮັບການກວດສອບຈາກບໍລິສັດກວດສອບພາຍນອກ (ບໍລິສັດເອເຊຍຈຳກັດ) ເພື່ອໃຫ້ເຫັນໄດ້ຈຸດດີ, ຂໍ້ຄົງຄ້າງຂອງການດຳເນີນງານແລ້ວມີການປັບປຸງໃຫ້ດີຂຶ້ນ; ແກ້ໄຂຂໍ້ຄົງຄ້າງຕາມຄຳແນະນຳໃນບົດລາຍງານຂອງບໍລິສັດກວດສອບພາຍນອກ ແລະ ຄະນະກວດກາກັບທີ່ປະຈຳປີ 2018-2019 ຂອງກົມຄຸ້ມຄອງສະຖາບັນການເງິນ ທຫລ; ເອົາໃຈໃສ່ລົງຕິດຕາມ ແລະ ເກັບກູ້ຄືນໜີ້ຊັກຊ້າ, ໜີ້ທີ່ຖືກຫັກລ້າງອອກນອກຜັງເປັນປົກກະຕິ.

ສຳລັບເງິນຮຸ້ນ-ເງິນຝາກ ໂດຍທົ່ວໄປ, ສະມາຊິກມີຄວາມຕື່ນຕົວ ແລະ ເພີ່ມຄວາມຮັບຜິດຊອບປະຕິບັດສິດໜ້າທີ່ຂອງຕົນຕໍ່ສະຫະກອນກໍ່ຄືຕໍ່ຕົນເອງຫຼາຍຂຶ້ນສະແດງອອກເຖິງການສະສົມເງິນຝາກປະຢັດ ແລະ ສະສົມຮຸ້ນສະໝໍ່າສະເໝີ ຕາມກຳລັງຄວາມສາມາດ ແລະ ຄວາມສະດວກຂອງສະມາຊິກແຕ່ລະຄົນແລະໄດ້ນຳໃຊ້ແຫຼ່ງທຶນເຂົ້າຖືກເປົ້າໝາຍ; ການຊຳລະເງິນກູ້ ກໍ່ໄດ້ຊຳລະເງິນຕົ້ນທຶນ ແລະ ດອກເບ້ຍເປັນປົກກະຕິຕາມສັນຍາ; ອັດຕາສ່ວນໜີ້ຊັກຊ້າ, ໜີ້ເສຍໃນປີນີ້ກໍ່ຢູ່ໃນເກນຄວາມສ່ຽງໜ້ອຍ ແລະ ເຮັດໃຫ້ເງິນກູ້ສາມາດສ້າງໃຫ້ເກີດປະໂຫຍດ, ສ້າງລາຍໄດ້ແກ່ສະມາຊິກໃນການຜະລິດກະສິກຳ-ຄ້າຂາຍຍ່ອຍ, ການກໍ່ສ້າງສ້ອມແປງເຮືອນ, ເປັນທຶນການສຶກສາ, ບັນເທົາຄວາມເດືອດຮ້ອນເວລາເຈັບເປັນ ແລະ ອື່ນໆເຮັດໃຫ້ຄອບຄົວສະມາຊິກໄດ້ຮັບການພັດທະນາ-ມີຄວາມສະຫງົບ, ປະກອບສ່ວນຍົກຖານະຄວາມເປັນຢູ່ທາງດ້ານເສດຖະກິດ ແລະ ສັງຄົມດີຂຶ້ນເປັນກ້າວໆ.

ແຜນດຳເນີນງານຂອງ ສສງມ ໃນປີ 2021 ຈະສືບຕໍ່ປັບປຸງແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງໃນຜ່ານມາ, ສ້າງຄວາມເຂັ້ມແຂງໃນການບໍລິຫານຈັດການ-ການຄຸ້ມຄອງ, ຮັບປະກັນໃຫ້ສະຫະກອນມີສະພາບຄ່ອງທາງດ້ານການເງິນ, ປະຕິບັດໜ້າທີ່ຢ່າງມືອາຊີບ, ມີຄຸນນະພາບ ມີຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສະໜອງແຫຼ່ງທຶນດ້ວຍການວິເຄາະ, ລົງເລິກຕິດຕາມ ກວດກາສະພາບຕົວຈິງກ່ອນ-ຫຼັງປ່ອຍສິນເຊື່ອໃຫ້ຖືກເປົ້າໝາຍ; ພ້ອມນັ້ນ, ຍັງຈະລະດົມທຶນຈາກສະມາຊິກດ້ວຍການເພີ່ມຮຸ້ນ, ຝາກເງິນເພື່ອໃຫ້ມີທຶນພຽງພໍກັບຄວາມຕ້ອງການຂອງ ສສງມ ເພື່ອໃຫ້ມີຄວາມໝັ້ນຄົງ ແລະ ຮັບປະກັນສະຖຽນລະພາບທາງດ້ານການເງິນຂອງ ສສງມ.

ຈາກນັ້ນທີ່ປະຊຸມ ຍັງໄດ້ມີກິດຈະກຳຄືນກຳໄລໃຫ້ສະມາຊິກ ສສງມ ດ້ວຍການຈົກສະຫຼາກມອບເຄື່ອງໃຊ້ຄົວເຮືອນໃຫ້ບັນດາທ່ານທີ່ໂຊກດີ ໃນນີ້ ທີ 3 ໄດ້ຮັບເຄື່ອງປັ່ນໝາກໄມ້ມີ 10 ລາງວັນ; ທີ 2 ຮັບເຕົາແກັດ 5 ລາງວັນ ແລະ ທີ 1 ໄດ້ຮັບຕູ້ນໍ້າເຢັນ 1 ລາງວັນ; ກອງປະຊຸມຍັງໄດ້ມີການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາໃນຖານະເຈົ້າຂອງຮຸ້ນ ຫຼື ສະມາຊິກໃສ່ບົດສະຫຼຸບ ແລະ ແຜນປີ 2021; ພ້ອມນີ້ຍັງສະເໜີ ກ່ຽວກັບການຈັດສັນກຳໄລປີ 2020, ແຈ້ງເງິນປັນຜົນໃຫ້ສະມາຊິກໃນປີ 2020 ແລະ ດຳເນີນການເລືອກຕັ້ງເອົາຄະນະສະພາບໍລິຫານ 5 ທ່ານ ຢ່າງເປັນປະຊາທິປະໄຕ ບົນພື້ນຖານການສະເໜີຜົນງານການເຄື່ອນໄຫວວຽກງານຕົວຈິງໃນຜ່ານມາຂອງຕົນ ແລະ ກໍ່ມີການຄັດເລືອກ-ເລືອກເຟັ້ນຢ່າງລັກແນ່ຈາກບັນດາສະມາຊິກ ຊຶ່ງຜົນປະກົດອອກມາແມ່ນທ່ານ ສຸວັນທອນ ລັດຕະນະວົງ ໄດ້ຮັບການເລືອກຕັ້ງເປັນປະທານ ສສງມ ຊຸດໃໝ່, ພ້ອມທັງເລືອກເອົາຄະນະຄຸ້ມຄອງສິນເຊື່ອ ແລະ ຄະນະກວດກາພາຍໃນຕື່ມອີກ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ